# ທ່ານ ທອງສິງ ທຳມະວົງ ຕ້ອນຮັບຜູ້ແທນສະພາກຳປູເຈຍເຂົ້າຢ້ຽມຂ່ຳນັບ.



(ປຊຊ): ທ່ານ ທອງສິງ ທຳມະວົງ ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບທ່ານ ນາງ ໂຮໂນນ ຫົວໜ້າກຳມາທິການສາທາລະນາສຸກ, ວຽກງານສັງຄົມ, ນັກຮົບເກົ່າ, ຟື້ນຟູບຳບັດຊາວໜຸ່ມ, ແຮງງານ, ບຳລຸງວິຊາຊີບ ແລະວຽກ ງານແມ່ຍິງສະພາແຫ່ງຊາດຣາຊະອານາຈັກກຳປູເຈຍ ພ້ອມຄະນະເຂົ້າຢ້ຽມຂ່ຳນັບ ໃນຕອນແລງວັນທີ 10 ສິງຫາ 2010 ນີ້ທີ່ສະພາແຫ່ງຊາດ. ໃນໂອກາດເດີນທາງມາຢ້ຽມຢາມລາວໃນລະຫ່ວາງວັນທີ 9-15 ສິງຫາ 2010 ນີ້ .

ໃນໂອກາດຕ້ອນຮັບຄະນະຜູ້ແທນດັ່ງກ່າວ ທ່ານປະທານສະພາແຫ່ງຊາດໄດ້ຕີລາຄາສູງ ຕໍ່ການເດີນທາງມາຢ້ຽມຢາມລາວໃນຄັ້ງນີ້ ເຊິ່ງເປັນການປະກອບສ່ວນເຂົ້າໃນການເພີ້ມພູນຄູນສ້າງໄມຕີຈິດ ມິດຕະພາບອັນເປັນມູນເຊື້ອ, ຄວາມສາມັກຄີ ແລະ ການຮ່ວມມື້ລະຫ່ວາງສອງປະເທດ ລາວ-ກຳປູເຈຍ ເວົ້າລວມ ເວົ້າສະເພາະແມ່ນການພົວພັນ ຮ່ວມມືລະຫວ່າງສອງສະພາແຫ່ງຊາດ ແລະ ສອງກຳມາທິການໃຫ້ນັບມື້ແໜ້ນແຟ້ນຍິ່ງຂື້ນ.

ໃນຕອນເຊົ້າວັນດຽວກັນສອງກຳມາທິການສອງຝ່າຍກໍ່ມີການພົບປະ ແລກປ່ຽນບົດຮຽນນຳກັນ ເຊິ່ງຝ່າຍລາວນຳໂດຍທ່ານ ດວງດີ ອຸດທະຈັກ ຫົວໜ້າກຳມາທິການວັດທະນະທຳ-ສັງຄົມ ພ້ອມຄະນະ ແລະ ຝ່າຍກຳປູເຈຍ ນຳໂດຍ ທ່ານ ນາງ ໂຮໂນນ ພ້ອມຄະນະ ໃນການພົບປະສອງຝ່າຍໄດ້ແຈ້ງສະພາບຫຍໍ້ ຂອງວຽກງານສະພາ ແລະ ການພັດທະນາເສດຖະກິດ-ສັງຄົມຂອງແຕ່ລະປະເທດໃຫ້ກັນຊາບ. ຝ່າຍລາວໄດ້ແຈ້ງໃຫ້ຝ່າຍກຳປູເຈຍຊາບວ່າ: ຕະຫຼອດໄລຍະຜ່ານມາສະພາແຫ່ງຊາດຊຸດທີ່ VI ຂອງລາວໄດ້ຄົ້ນຄ້ວາ, ພິຈາລະນາ ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ໃນຂົງເຂດວັດທະນະທຳ-ສັງຄົມ ໄດ້ 20 ກ່າວສະບັບ. ກຳມາທິການວັດທະນະທຳ-ສັງຄົມ ແມ່ນອົງ ການເສນາທິການຂອງກອງປະຊຸມສະພາແຫ່ງຊາດ ແລະ ຄະນະປະຈຳສະພາແຫ່ງຊາດ. ມີພາລະບົດບາດໃນການຈັດຕັ້ງປະຕິບັດວຽກງານຂອງສະພາແຫ່ງຊາດ ກວມເອົາ 12 ຂະແໜງການ ເຊິ່ງເປັນວຽກງານທີ່ກ້ວາງຂວາງ ແລະ ຫຍຸ້ງຍາກພໍ່ສົມຄວນ.